**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ພະແນກກະສິກຳ ແລະ ປ່າໄມ້ນະຄອນຫຼວງວຽງຈັນ

ເລກທີ: 2341 /ກປ.ນວ

ນະຄອນຫຼວງວຽງຈັນ, ວັນທີ: 26 OCT 2016

## ແຈ້ງການ

**ເຖິງ: - ຫ້ອງການ ກະສິກຳ ແລະ ປ່າໄມ້ ປະຈຳ 9 ເມືອງ.**

**- ຂະແໜງ ລ້ຽງສັດ ແລະ ການປະມົງນະຄອນຫຼວງວຽງຈັນ.**

**- ບໍລິສັດ, ນິຕິບຸກຄົນ ແລະ ຜູ້ປະກອບການ ຄ້າ-ຂາຍສັດ ແລະ ບັນດາຟາມລ້ຽງສັດ.**

**ເລື່ອງ: ການຈັດຕັ້ງປະຕິບັດຂຶ້ນທະບຽນພິມສັດ ແລະ ໝາຍເລກປະຈຳໂຕສັດ ທີ່ນຳເຂົ້າມາເປັນ ພໍ່-ແມ່ພັນສັດ, ແນວພັນສັດ ແລະ ສັດລ້ຽງເພື່ອເປັນສິນຄ້າ ຢູ່ພາຍໃນນະຄອນຫຼວງວຽງຈັນ.**

- ອີງຕາມກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ສະບັບເລກທີ 03/ສພຊ, ລົງວັນທີ 25 ກໍລະກົດ 2008 ກ່ຽວກັບການຄຸ້ມຄອງການລ້ຽງສັດ ແລະ ການສັດຕະວະແພດ ພາກທີ II ໝວດທີ I ມາດຕາ 13.
- ອີງຕາມລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ພາກທີ II ໝວດທີ VIII ມາດຕາທີ 42 ຄ່າບໍລິການຂອງຂະແໜງການກະສິກຳ ແລະ ປ່າໄມ້.
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 2903/ກປ, ລົງວັນທີ 19 ພະຈິກ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງດ່ານກວດກາສັດຕະວະແພດສາກົນ.
- ອີງຕາມບົດປະກອບຄຳເຫັນຂອງຫົວໜ້າກົມລ້ຽງສັດ ແລະການປະມົງ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 2430/ກລປ, ລົງວັນທີ 29 ກັນຍາ 2016.

ເພື່ອເປັນການຜັນຂະຫຍາຍເຜີຍແຜ່ ແລະ ການຈັດຕັ້ງປະຕິບັດກົດໝາຍ, ດຳລັດ, ຄຳສັ່ງ, ຂໍ້ຕົກລົງ ແລະ ແຈ້ງການຕ່າງໆ ຂອງຂັ້ນເທິງວາງອອກ ໃຫ້ບັນລຸຜົນສຳເລັດຕາມຈຸດປະສົງເປົ້າໝາຍແຜນການທີ່ວາງໄວ້. ກໍ່ຄືໃນການຈັດຕັ້ງປະຕິບັດ ກ່ຽວກັບການຂຶ້ນທະບຽນພິມສັດ ແລະ ການໝາຍເລກປະຈຳໂຕສັດ ກ່ອນຈະນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍສັດອອກຈາກຟາມ ເພື່ອເກັບກຳສະຖິຕິສັດລ້ຽງໃຫ້ມີຄວາມຊັດເຈນ, ສ້າງເງື່ອນໄຂໃຫ້ແກ່ການຄຸ້ມຄອງຝູງສັດ ແລະ ດຸ່ນດ່ຽງຝູງສັດ ແນໃສ່ປົກປ້ອງສິດຜົນປະໂຫຍດຂອງຜູ້ລ້ຽງສັດ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການຕິດຕາມ, ກວດກາການມອບໂອນກຳມະສິດ, ການຊື້-ຂາຍ ແລະ ການແລກປ່ຽນ ສັດຢູ່ພາຍໃນປະເທດ, ນຳເຂົ້າ-ສົ່ງອອກຕ່າງປະເທດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ. ອີກດ້ານໜຶ່ງເພື່ອເກັບກຳແຫຼ່ງກຳເນີດຂອງສັດ, ຊະນິດສັດ, ອາຍຸ, ເພດ ແລະ ຈຸດພິເສດຂອງສັດທີ່ຈະມີການເຄື່ອນຍ້າຍ ຈາກເຂດປອດພະຍາດ ແລະ ເຂດທີ່ມີການລະບາດພະຍາດສັດ ເພື່ອໃຫ້ຖືກຕ້ອງສອດຄ່ອງຕາມມາດຕະຖານອົງການພະຍຸສັດສາກົນ (Office International des Epizooties (OIE) ແລະ ສົນທິສັນຍາວ່າດ້ວຍສຸຂານາໄມ ແລະ ສຸຂານາໄມພືດ (Sanitary Phytosanitary Standart (SPS).

**ພະແນກ ກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ອອກແຈ້ງການ ດັ່ງນີ້:**

1. ໃຫ້ຂະແໜງລ້ຽງສັດ ແລະ ການປະມົງນະຄອນຫຼວງວຽງຈັນ ຊີ້ນຳໜ່ວຍງານດ່ານກວດກາສັດຕະວະແພດສາກົນ, ໜ່ວຍງານລ້ຽງສັດ ຂະແໜງລ້ຽງສັດ ແລະ ການປະມົງນະຄອນຫຼວງວຽງຈັນ, ໜ່ວຍງານລ້ຽງສັດ-ການປະມົງ ປະຈຳ 9 ເມືອງ ແລະ ລົງສົມທົບອົງການປົກຄອງຂັ້ນທ້ອງຖິ່ນ ເພື່ອຈັດຕັ້ງໂຄສະນາເຜີຍແຜ່ນິຕິກຳຕ່າງໆ ໃຫ້ບັນດາບໍລິສັດ ແລະ ຜູ້ປະກອບການຄ້າ-ຂາຍສັດ ທີ່ນຳເຂົ້າ-ສົ່ງອອກ ຕະຫຼອດຮອດບັນດາຟາມ ແລະ ຄອບຄົວລ້ຽງສັດ ໃຫ້ຮັບຮູ້ ແລະ ເຂົ້າໃຈ ພ້ອມກັນຈັດຕັ້ງປະຕິບັດ.
2. ໃຫ້ໜ່ວຍງານດ່ານກວດກາສັດຕະວະແພດສາກົນ ຈັດຕັ້ງປະຕິບັດການຂຶ້ນທະບຽນພິມສັດ ແລະ ການໝາຍສັດ ພໍ່-ແມ່ພັນສັດ ແລະ ແນວພັນສັດ ເວລານຳເຂົ້າມາພາຍໃນນະຄອນຫຼວງວຽງຈັນ ຕາມລະບຽບເຕັກນິກວິຊາການ ແລ້ວລາຍງານໜ່ວຍງານລ້ຽງສັດ ຂະແໜງລ້ຽງສັດ ແລະ ການປະມົງນະຄອນຫຼວງວຽງຈັນ ຊາບທຸກໆຄັ້ງ.
3. ສຳຫຼັບຝູງສັດລ້ຽງ 9 ເມືອງ ໃນນະຄອນຫຼວງວຽງຈັນ ແມ່ນມອບໃຫ້ໜ່ວຍງານລ້ຽງສັດ ຂະແໜງລ້ຽງສັດ ແລະ ການປະມົງນະຄອນຫຼວງວຽງຈັນ ຈັດຕັ້ງປະຕິບັດ ໃນການຂຶ້ນທະບຽນພິມສັດ ແລະ ໝາຍສັດ.
4. ບໍລິສັດ ແລະ ຜູ້ປະກອບການຄ້າ-ຂາຍສັດ ທີ່ນຳເຂົ້າ-ສົ່ງອອກ-ຂົນສົ່ງຜ່ານ ສັດເຂົ້າຈາກຕ່າງປະເທດ ລົງຟາມປາຍທາງທີ່ຕັ້ງຢູ່ 9 ເມືອງພາຍໃນນະຄອນຫຼວງວຽງຈັນ ຕ້ອງອຳນວຍຄວາມສະດວກ, ໃຫ້ຄວາມຮ່ວມມື, ສະໜອງເອກະສານ ແລະ ຂໍ້ມູນຕ່າງໆທີ່ຈຳເປັນກ່ຽວກັບສັດ ໃຫ້ພະນັກງານສັດຕະວະແພດປະຈຳດ່ານສາກົນ ທີ່ລົງຈັດຕັ້ງປະຕິບັດວຽກງານດັ່ງກ່າວຕົວຈິງ.
5. ບໍລິສັດ ແລະ ຜູ້ປະກອບການຄ້າ-ຂາຍສັດ ຕ້ອງປະຕິບັດຕາມລະບຽບຫຼັກການ ແລະ ເຕັກນິກວິຊາການທີ່ວາງອອກຢ່າງເຂັ້ມງວດ.
6. ສ່ວນຄ່າບໍລິການຂຶ້ນທະບຽນພິມສັດ ແລະ ການໝາຍເລກປະຈຳໂຕສັດ ທີ່ນຳເຂົ້າມາພາຍໃນນະຄອນຫຼວງວຽງຈັນ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ແຫ່ງ ສປປລາວ ສະບັບເລກທີ003/ປປທ, ລົງວັນທີ 26 ທັນວາ 2012 ພາກທີ II ໝວດທີ VIII ມາດຕາທີ 42 ຄ່າບໍລິການຂອງຂະແໜງການກະສິກຳ ແລະ ປ່າໄມ້.
7. ຄ່າໃຊ້ຈ່າຍສິ້ນເປືອງອຸປະກອນຕ່າງໆ ເຊັ່ນ: ຢາຕ້ານເຊື້ອ (Antibiotics), ຢາປ້ອງກັນພະຍາດສັດ (Vaccine), ເບີໝາຍຫູສັດ ແລະ ອື່ນໆ ແມ່ນເປັນພັນທະຂອງຜູ້ປະກອບການກ່ຽວກັບການລ້ຽງສັດ ແລະ ການສັດຕະວະແພດ ທີ່ເປັນຜູ້ຮັບຜິດຊອບໂດຍກົງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ບ່ອນສົ່ງ:

ຮັບແທນ ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ

- ຫ້ອງການກະຊວງກະສິກຳ-ປ່າໄມ້ 1 ສະບັບ ເພື່ອລາຍງານ
- ຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ 1 ສະບັບ ເພື່ອລາຍງານ
- ສະມາຊິກສະພາປະຊາຊົນ ເຂດ1 ນະຄອນຫຼວງວຽງຈັນ 1 ສະບັບ ເພື່ອລາຍງານ
- ກົມລ້ຽງສັດ ແລະ ການປະມົງ 1 ສະບັບ ເພື່ອລາຍງານ
- ດ່ານສາກົນຂົວມິດຕະພາບ1 1 ສະບັບ ເພື່ອລາຍງານ
- ຫ້ອງການບໍລິຫານພະແນກກະສິກຳ-ປ່າໄມ້ ນວ 1 ສະບັບ ເພື່ອຊາບ
- ຫ້ອງການກະສິກຳ ແລະ ປ່າໄມ້, ໜ່ວຍງານລ້ຽງສັດ ປະຈຳເມືອງ 1 ສະບັບ ເພື່ອຈັດຕັ້ງປະຕິບັດ
- ຂະແໜງລ້ຽງສັດ ແລະ ການປະມົງ 1 ສະບັບ ເພື່ອຈັດຕັ້ງປະຕິບັດ
- ບໍລິສັດ ແລະ ຜູ້ປະກອບການຄ້າ-ຂາຍສັດ ທີ່ນຳເຂົ້າສັດ 1 ສະບັບ ເພື່ອຈັດຕັ້ງປະຕິບັດ

ຄຳສິງ ດູນສະຫວັນ